ບໍລິສັດ ດາວທຽມລາວ ເອເຊຍ-ປາຊີຟິກ ຈຳກັດ
ຫຼັກ 14 ຖະໜົນທ່າເດື່ອ, ບ້ານນາໄຮ່, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ
ໂທ: (+856)21 821000 ext.8182 ແຟັກ: (+856)21 821005.

ເລກທີ:....023..../DTH

ນະຄອນຫລວງວຽງຈັນ, ວັນທີ:21/08/2019

# ໃບແຈ້ງການ

ຮຽນ: ລູກຄ້າ ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ການຢຸດຕິການອອກອາກາດ ຊ່ອງລາຍການກິລາ BEIN Sports ແລະ ບາງຊ່ອງລາຍການ ໂທລະພາບຂອງຕ່າງປະເທດ ຜ່ານກ່ອງຮັບສັນຍານໂທລະພາບຜ່ານດາວທຽມLAOSAT HD.

ບໍລິສັດ ດາວທຽມລາວ ເອເຊຍ-ປາຊີຟິກ ຈຳກັດ ຂໍແຈ້ງໃຫ້ທ່ານຜູ້ຊົມຊາບວ່າ: ທາງບໍລິສັດ ຈະຢຸດຕິການອອກອາກາດຊອ່ງໂທລະພາບລາຍການກິລາ BEIN Sports ແລະ ບາງຊ່ອງລາຍການໂທລະພາບຂອງຕ່າງປະເທດ ຜ່ານກ່ອງຮັບສັນຍານດາວທຽມ LAOSAT HD ນັບແຕ່ວັນທີ: 31-07-2019 ເປັນຕົ້ນໄປ.

ທັງນີ້ ເນື່ອງຈາກວ່າ ຊ່ອງກິລາ BEIN Sports ບໍ່ໄດ້ຮັບລິຂະສິດລາຍການເຕະບານພຣີເມຍລີກອັງກິດ (Premier League) ໃນລະດູການນີ້, ສະນັ້ນ ບໍລິສັດ ຈຶ່ງໄດ້ຕັດສິນໃຈ ບໍ່ຕໍ່ສັນຍາກັບຊ່ອງກິລາ BEIN Sports ແລະ ບາງຊ່ອງລາຍການອື່ນໆອີກ ເປັນຕົ້ນແມ່ນ BBC Cbeebies, BBC Earth, Warner TV ແລະ Animax, ແຕ່ພວກເຮົາກໍ່ຈະດຳເນີນການປະສານງານ ເຈລະຈາ ເລືອກເຟັ້ນເອົາຊ່ອງລາຍການອື່ນທີ່ດີກວ່າ ມາທົດແທນຊ່ອງລາຍການ ເຫລົ່ານີ້ໃຫ້ໄວທີ່ສຸດ.

ພວກເຮົາ ຕ້ອງຂໍອະໄພເປັນຢ່າງສູງ ຕໍ່ຄວາມບໍ່ສະດວກໃນການຮັບຊົມຊ່ອງໂທລະພາບ ທີ່ມີການປ່ຽນແປງໃນຊ່ວງເວລານີ້ດ້ວຍ.

ບໍລິສັດ ດາວທຽມ ເອເຊຍ-ປາຊີຟິກ ຈຳກັດ
Lao Asia Pacific Satellite Co., Ltd.

ພະແນກການຕະຫລາດໂທລະພາບຜ່ານດາວທຽມ (DTH)

ພະແນກໂທລະພາບຜ່ານດາວທຽມ
DTH Department